**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງການເງິນ

ຫ້ອງການກະຊວງ

ເລກທີ 0516 /ຫກ

ນະຄອນຫຼວງວຽງຈັນ,ວັນທີ 17 ກຸມພາ 2023

## ໜັງສືແຈ້ງເຊີນຍື່ນເຈດຈຳນົງຄວາມສົນໃຈ

### ສຳລັບການຈັດຈ້າງ ຊ່ຽວຊານທີ່ປຶກສາ ໃນການຄຸ້ມຄອງລະບົບຂໍ້ມູນຂ່າວສານການເງິນ 27 ຕຳແໜ່ງ

- ອີງຕາມກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງການກະຊວງການເງິນ ສະບັບເລກທີ 6118/ກງ, ລົງ ວັນທີ 10 ທັນວາ 2021;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການອະນຸມັດວ່າຈ້າງບໍລິສັດ ແລະ ຊ່ຽວຊານທີ່ປຶກສາ ໃນການຄຸ້ມຄອງລະບົບຂໍ້ມູນຂ່າວສານການເງິນ ສະບັບເລກທີ 0017/ກງ, ລົງວັນທີ 06 ມັງກອນ 2023.

1. ຫ້ອງການກະຊວງການເງິນ ໄດ້ຮັບອະນຸມັດໃຫ້ນຳໃຊ້ງົບປະມານປະຈຳປີ 2023 ບ້ວງທຶນເປັນທຶນສະໄໝຂອງກະຊວງການເງິນ ເພື່ອດຳເນີນການຈັດຈ້າງ ຊ່ຽວຊານທີ່ປຶກສາ ໃນການຄຸ້ມຄອງລະບົບຂໍ້ມູນຂ່າວສານການເງິນ;
2. ການປະມູນຄັ້ງນີ້ ຈະດຳເນີນຕາມຂັ້ນຕອນ, ຕາມກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນລັດ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ລະບຽບການຈັດຕັ້ງປະຕິບັດຄຳແນະນຳ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ເຈົ້າຂອງໂຄງການ ຫ້ອງການກະຊວງການເງິນ ຂໍເຊີນບັນດາ ຊ່ຽວຊານທີ່ປຶກສາ (ບຸກຄົນ/ນິຕິບຸກຄົນ) ທີ່ມີຄວາມສົນໃຈ ຍື່ນໜັງສືສະແດງຄວາມສົນໃຈຂອງຕົນເພື່ອສະໜອງການບໍລິການດັ່ງກ່າວ. ບຸກຄົນ/ນິຕິບຸກຄົນ) ຕ້ອງສະໜອງຂໍ້ມູນທີ່ສະແດງເຖິງຄວາມເໝາະສົມໃນການສະໜອງການບໍລິການ ທີ່ມີຄຸນວຸທິ ແລະ ມີປະສົບການທີ່ກ່ຽວຂ້ອງໃນການປະຕິບັດການບໍລິການດັ່ງກ່າວ. ມາດຖານການຄັດເລືອກທີ່ຈະເຂົ້າມາເປັນທີ່ປຶກສາ ທາງດ້ານສະເພາະ ມີດັ່ງນີ້:
   - 3.1 ຊ່ຽວຊານທີ່ປຶກສາໃນການພັດທະນາລະບົບ ຈຳນວນ 02 ຄົນ; ຊ່ຽວຊານທີ່ປຶກສາ ຄຸ້ມຄອງລະບົບຖານຂໍ້ມູນ 02 ຄົນ ແລະ ຜູ້ພັດທະນາລະບົບ, ຄຸ້ມຄອງ website, email, vbox 02 ຄົນ (ປະຈຳຢູ່ ທີ່ກົມເຕັກໂນໂລຊີຂໍ້ມູນຂ່າວສານການເງິນ, ກະຊວງການເງິນ);
   - 3.2 ພະນັກງານຄຸ້ມຄອງຖານຂໍ້ມູນ ຈຳນວນ 03 ຄົນ; ຜູ້ພັດທະນາລະບົບ 03 ຄົນ ແລະ ຜູ້ຄຸ້ມຄອງເຄືອຂ່າຍ 03 ຄົນ (ປະຈຳຢູ່ ທີ່ກົມພາສີ, ກະຊວງການເງິນ);
   - 3.3 ພະນັກງານຄຸ້ມຄອງລະບົບຖານຂໍ້ມູນຈຳນວນ 03 ຄົນ; ຜູ້ພັດທະນາລະບົບ 03 ຄົນ ແລະ ຜູ້ຄຸ້ມຄອງເຄືອຂ່າຍ 03 ຄົນ (ປະຈຳຢູ່ ທີ່ກົມສ່ວຍສາອາກອນ, ກະຊວງການເງິນ);
   - 3.4 ພະນັກງານຄຸ້ມຄອງ ແລະ ພັດທະນາລະບົບ ຈຳນວນ 01 ຄົນ ແລະ ຜູ້ບັນທຶກຂໍ້ມູນເຂົ້າໃນລະບົບ 02 ຄົນ (ປະຈຳຢູ່ ທີ່ກົມກົມຄຸ້ມຄອງຊັບສິນແຫ່ງລັດ, ກະຊວງການເງິນ).

4 ເອກະສານທີ່ຕ້ອງຍື່ນເຈດຈຳນົງຄວາມສົນໃຈປະກອບມີເອກະສານດັ່ງນີ້:

4.1 ຊີວະປະຫວັດຫຍໍ້ (CV) ຂອງຕົນ ແລະ ລະບຸຕຳແໜ່ງງານທີ່ຕົນຕ້ອງການ;

4.2 ປະສົບການເຮັດວຽກຜ່ານມາກ່ຽວກັບຕຳແໜ່ງດັ່ງກ່າວ (ໃບຢັ້ງຢືນຜົນງານ ຫຼື ສັນຍາວ່າຈ້າງຄັດຕິດ);

5 ບັນດາຕຳແໜ່ງຂ້າງເທິງ ຜູ້ທີ່ມີຄວາມສົນໃຈສາມາດຕິດຕໍ່ພົວພັນເອົາຂໍ້ມູນລາຍລະອຽດດໄດ້ໃນໂມງລັດຖະການ (8:30 ໂມງ ຫາ 16:00 ໂມງ), ວັນຈັນ ເຖິງ ວັນສຸກ, ທີ່ ກົມເຕັກໂນໂລຊີຂໍ້ມູນຂ່າວສານການເງິນ, ກະຊວງການເງິນ, ບ້ານໂພນໄຊ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ເບີໂທ: 021 417766 ຫຼື 020 95755957, ເລີ່ມແຕ່ວັນທີ 20 ກຸມພາ ຫາ 03 ມີນາ 2023;

6 ຊຸດເອກະສານ ສົ່ງທີ່ ຫ້ອງປະຊຸມຊັ້ນ 1 ຂອງກົມເຕັກໂນໂລຊີຂໍ້ມູນຂ່າວສານການເງິນ, ກະຊວງການເງິນ ເລີ້ມເວລາ 09:00 ໂມງ ຫາ 11:00 ໂມງ ຂອງວັນທີ 03 ມີນາ 2023, ເອກະສານທີ່ສົ່ງມາທາງເອເລັກໂຕຼນິກຈະບໍ່ອະນຸຍາດ, ເອກະສານທີ່ສົ່ງຊ້າກວ່າ ເວລາທີ່ກຳນົດໄວ້ ຈະບໍ່ຮັບເອົາ;

7 ສຳລັບເງື່ອນໄຂການປະມູນ ຂອງຜູ້ສົນໃຈເຂົ້າຮ່ວມສະໝັກ ແລະ ເອກະສານກຳນົດຂອບເຂດຄວາມຮັບຜິດຊອບ (TOR) ຈະໄດ້ກຳນົດໄວ້ລະອຽດໃນຊອງເອກະສານ.

ຫົວໜ້າຫ້ອງການ

ສົມບູນ ອິນທະປັດຖາ